*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 40-46*
*https://doi.org/10.69692/SUJMRD10special40*

# Livelihood Restoration Satisfaction of the Resettlement People in Mekong-Xayabury Hydroelectric Power Project

**Phouvakone Keotha, Keopheth Phoumphon, and Khamtun Dansavan**
Water Resources Development and Management Department, Faculty of Water Resources, National University of Laos, Lao PDR

***Correspondence:** Phouvakone Keotha, Water Resources Development and Management Department, Faculty of Water Resources, National University of Laos. (+856 2056996456)
Email: PhouvakoneKT1980@gmail.com

***Submitted: December 05, 2024***
***Revised: December 15, 2024***
***Accepted: December 31, 2024***

**Abstract**

This paper is a study on the livelihood restoration satisfaction of the resettlement people in the Mekong- Xayabury Hydroelectric Power Project. The objectives of the study are to examine the family's income restoration activity satisfaction, the satisfaction of the family's income gained, and the satisfaction with the livelihood of the resettlement families in the new village. The research instrument of this study was the interview form; the researcher of this study interviewed all resettlement families in the total of 76 in Natongai village, Xayabury district, Xayabury province. Program SPSS was employed to calculate the data. The finding found that the resettlement families have positive satisfaction with the family's income activities restoration with M=4.17; Std= 0.575 at 95% confidential interval. The families have positive satisfaction with the family's income gained M=4.15 and Std= 0.655 at 95% confidential interval, and the resettlement families have positive satisfaction with the livelihood in the new resettlement village at 95% confidential interval.

**Key words**: *Livelihood, Restoration, Satisfaction, income*

## 1. ພາກສະເໜີ

ກ່ອນຊຸມປີ 1975, ສປປລາວ ມີເຂື່ອນໄຟຟ້າຂະໜາດກາງ **1** ແຫ່ງ ແລະ ເຂື່ອນໄຟຟ້າຂະໜາດນ້ອຍ 2 ແຫ່ງ, ປະຊາຊົນທີ່ໄດ້ຊົມໃຊ້ໄຟຟ້າພຽງແຕ່ 19,000 ຄົວເຮືອນ ຊຶ່ງກວມເອົາ 10% ຂອງຈໍານວນຄົວເຮືອນທັງໝົດໃນ 5 ຕົວເມືອງໃຫຍ່ຂອງປະເທດ (ກະຊວງພະລັງງານ ແລະ ບໍ່ແຮ່, 2016). ປະຈຸບັນການເຊື່ອມໂຍງເສດຖະກິດ ແລະ ການຮ່ວມມືລະຫວ່າງປະເທດຕ່າງໆໃນທົ່ວໂລກ ແລະ ພາກພື້ນໄດ້ມີການເພີ່ມຂຶ້ນດ້ວຍຫຼາຍຮູບແບບ, ຫຼາຍລະດັບ ແລະ ມີການແຂ່ງຂັນກັນສູງຂຶ້ນ, ມີຫຼາຍປະເທດໄດ້ກາຍເປັນສະມາຊິກຂອງອົງການສາກົນຕ່າງໆ ຊຶ່ງເຮັດໃຫ້ການຄ້າ, ການລົງທຶນ ແລະ ການບໍລິການເພີ່ມຂຶ້ນເປັນລໍາດັບ (ກະຊວງແຜນການ ແລະ ການລົງທຶນ, 2016). ສປປ ລາວ ມີພູມສັນຖານ ແລະ ຊັບພະຍາກອນນໍ້າທີ່ເປັນທ່າແຮງໃຫ້ແກ່ການຜະລິດໄຟຟ້ານໍ້າຕົກ, ການຜະລິດສະບຽງອາຫານ, ການທ່ອງທ່ຽວທໍາມະຊາດ ແລະ ອື່ນໆ, ຊຶ່ງໄດ້ກໍານົດທິດທາງການພັດທະນາພະລັງງານໄຟຟ້ານໍ້າຕົກ ແລະ ພະລັງງານທົດແທນ ເພື່ອສະໜອງພະລັງງານໃຫ້ແກ່ການຜະລິດ, ສັງຄົມ ແລະ ໃຫ້ກາຍເປັນໝໍ້ໄຟແຫ່ງອາຊຽນ, ໂດຍມີເປົ້າໝາຍສູ້ຊົນໃນການຜະລິດເຂື່ອນໄຟຟ້ານໍ້າຕົກຂະໜາດໃຫຍ່ 10 ແຫ່ງ ເພື່ອຜະລິດກະແສໄຟຟ້າໃຫ້ໄດ້ 5,015 ເມກາວັດ ແລະ ຮັບປະກັນໃຫ້ຄົວເຮືອນໄດ້ເຂົ້າເຖິງການຊົມໃຊ້ໄຟຟ້າເພີ່ມຂຶ້ນ 80% ໃນປີ 2015 (ກະຊວງແຜນການ ແລະ ການລົງທຶນ, 2011). ໃນປະຈຸບັນ ສປປ ລາວ ມີແຜນສ້າງເຂື່ອນໄຟຟ້າພະລັງງານນໍ້າທັງໝົດ 429 ແຫ່ງ ຊຶ່ງມີກໍາລັງຕິດຕັ້ງທັງໝົດ 29,191 ເມັກກາວັດ ແລະ ມີກໍາລັງການຜະລິດ 129,589 ກິກາວັດໂມງຕໍ່ປີ. ໃນນີ້ມີ 246 ໂຄງການແມ່ນໄດ້ເຊັນບົດບັນທຶກຄວາມເຂົ້າໃຈແລ້ວ(MOUs), ໃນຂະນະທີ່ 35 ໂຄງການຈະຕ້ອງສ້າງສໍາເລັດກ່ອນປີ 2025 ແລະ 58 ໂຄງການຈະໄດ້ນໍາໃຊ້ກ່ອນປີ 2030 (Chanthavong, 2022).

ໂຄງການເຂື່ອນໄຟຟ້າທີ່ສ້າງຂຶ້ນແລ້ວໃນ ສປປ ລາວ ມີຫລາຍໂຄງການທີ່ຕ້ອງມີການຈັດສັນຍົກຍ້າຍປະຊາຊົນອອກຈາກພື້ນທີ່ໂຄງການເພື່ອໄປຕັ້ງບ້ານເຮືອນ ແລະ ດໍາລົງຊີວິດຢູ່ບ່ອນໃໝ່. ການປັບຕົວທາງດ້ານເສດຖະກິດຂອງຜູ້ຖືກຈັດສັນຍົກຍ້າຍບາງເຜົ່າຂອງໂຄງການເຂື່ອນໄຟຟ້ານໍ້າເທີນ 2 ແມ່ນບໍ່ມີເງິນທ້ອນ ແລະ ຕ້ອງເກັບເຄື່ອງປ່າຂອງດົງ ແລະ ຂາຍແຮງງານລາຍວັນເພື່ອດໍາລົງຊີວິດ (Phonevilay, 2013). ການຈັດຕັ້ງປະຕິບັດຂອງໂຄງການມີຂໍ້ຈໍາກັດດ້ານການມີສວນຮ່ວມຢ່າງເຕັມທີ່ຂອງປະຊາຊົນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນແມ່ນພົບຄວາມຫຍຸ້ງ ແລະ ບໍ່ໄດ້ຕາມມາດຕະຖານທີ່ແນ່ນອນ (ສີລິນທອນ ສັກລໍຄໍາ, ພ້ອມດ້ວຍຄະນະ,

2014). ການພັດທະນາຂອງລັດ ແລະ ໂຄງການມີຜົນທາງບວກ ແລະ ທາງລົບຕໍ່ການພັດທະນາເສດຖະກິດຄອບຄົວ, ການພົວພັນທາງສັງຄົມ ແລະ ວັດທະນະທໍາ. ການພັດທະນາພື້ນຖານໂຄງລ່າງສ່ວນຫຼາຍດີຂຶ້ນ, ລາຍໄດ້ຈາກອາຊີບການປູກຝັງ ແລະ ລ້ຽງສັດຫຼຸດລົງ, ຈໍາເປັນຕ້ອງຫາອາຊີບອື່ນທົດແທນ. ດິນທີ່ຈັດສັນໃຫ້ຜະລິດກະສິກໍາບໍ່ເໝາະສົມ, ສະມັດຕະພາບຜົນຜະລິດເຂົ້າໄຮ່ໃນຕອນດິນທີ່ຈັດສັນຫຼຸດລົງເລື້ອຍໆ. ການປູກໄມ້ໃຫ້ໝາກ ແລະ ຢາງພາລາເປັນການຫັນປ່ຽນອາຊີບໃນໄລຍະຍາວເພື່ອການປັບຕົວ. ໂດຍລວມແລ້ວປະຊາຊົນມີຄຸນະພາບຊີວິດທີ່ດີຂຶ້ນຈາກເດີມ, ປະຊາຊົນຍັງຮັກສາວັດທະນະທໍາ ແລະ ປະເພນີອື່ນໆ, ແລະ ປະຊາຊົນສ່ວນຫລາຍມີຄວາມໝັ້ນໃຈຕໍ່ພື້ນທີ່ຈັດສັນ (ຈັນສຸກ ທວານແພງພັນ, 2015).

ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ຈັດສັນຍົກຍ້າຍຈາກເຂື່ອນໄຟຟ້ານໍ້າເທີນຫີນບູນພາກຂະຫຍາຍ ແລະ ເຂື່ອນໄຟຟ້ານໍ້າລີກ 1-2 ເຫັນວ່າມີຂໍ້ຈໍາກັດຫຼາຍດ້ານ ໂດຍສະເພາະຍັງບໍ່ໄດ້ຮັບການຮ່ວມມືເທົ່າທີ່ຄວນ ແລະ ປະຊາຊົນບໍ່ມີຄວາມຮູ້ພື້ນຖານໃນດ້ານຕ່າງໆທີ່ກ່ຽວຂ້ອງໃນການພັດທະນາໂຄງການ (ເພັດສີຫາ ສີປະເສີດ, 2014). ການຍົກຍ້າຍບ້ານຂອງປະຊາຊົນ ເມືອງນາແລ ແຂວງຫຼວງນໍ້າທາ ເຊິ່ງປະຊາຊົນສ່ວນໃຫຍ່ມີຄວາມເພິ່ງພໍໃຈດ້ານຜົນປະໂຫຍດທາງເສດຖະກິດທີ່ໂຄງການພັດທະນາຕ່າງໆໄດ້ໃຫ້ຄວາມສໍາຄັນແກ່ການພັດທະນາຊີວິດການເປັນຢູ່ ແລະ ສິ່ງອໍານວຍຄວາມສະດວກ (ບົວເງິນ ສຸວັນນາທອງ, 2020). ໃນການຈັດສັນຍົກຍ້າຍປະຊາຊົນເຫັນວ່າທຸກໂຄງການພັດທະນາເຂື່ອນໄຟຟ້າໄດ້ມີແຜນຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ຖືກຈັດສັນຍົກຍ້າຍຈາກໂຄງການ. ໃນການຈັດຕັ້ງປະຕິບັດແຜນຟື້ນຟູຊີວິດການເປັນຢູ່ຂອງຫລາຍໂຄງການເຫັນວ່າມີຄວາມສໍາເລັດຕາມເປົ້າໝາຍຫລາຍພໍສົມຄວນ ແຕ່ກໍຍັງມີບັນຫາ ແລະ ສິ່ງທ້າທາຍຫລາຍຢ່າງ ເປັນຕົ້ນ ບາງຄອບຄົວບໍ່ຫ້າວຫັນໃນການເຂົ້າຮ່ວມກິດຈະກໍາການຟື້ນຟູຊີວິດການເປັນຢູ່ ແລະ ຄວາມເປັນເຈົ້າການຂອງປະຊາຊົນທີ່ຖືກຈັດສັນຍົກຍ້າຍຍັງບໍ່ສູງ (Weiming Tong, Liyuan Zhu, and Kevin Lo,2019).

ໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ ຕັ້ງຢູ່ຕາມລໍານໍ້າຂອງລະຫວ່າງ ບ້ານຫ້ວຍຊຸຍ ເມືອງໄຊຍະບູລີ ແຂວງໄຊຍະບູລີ ກັບ ບ້ານປາກເນີນ ເມືອງນານ ແຂວງຫຼວງພະບາງ ທີ່ຈຸດພິກັດ 19°15’14.46’’N 101°48’49.2’’E ຫ່າງຈາກເທດສະບານເມືອງໄຊຍະບູລີ ໄປທາງທິດຕາເວັນອອກປະມານ 35 ກິໂລແມັດ. ໂຄງການສາມາດຜະລິດພະລັງງານໄດ້ 7,370 ກິກາວັດໂມງຕໍ່ປີ, ມີກໍາລັງຕິດຕັ້ງ 1,285 ເມັກກາວັດ ກະແສໄຟຟ້າທີ່ຜະລິດໄດ້ໂດຍສ່ວນໃຫຍ່ແມ່ນສົ່ງຂາຍໃຫ້ຕ່າງປະເທດ(ປະເທດໄທ), ອີກສ່ວນໜຶ່ງແມ່ນຊົມໃຊ້ຢູ່ພາຍໃນປະເທດ. ໂຄງການດັ່ງກ່າວເລີ່ມຕົ້ນລົງມືກໍ່ສ້າງໃນ ປີ 2012 ແລະ ສໍາເລັດໃນທ້າຍປີ 2019 (ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່, 2018). ການກໍ່ສ້າງໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ ໄດ້ມີຜົນກະທົບທາງກົງ ແລະ ທາງອ້ອມຕໍ່ປະຊາຊົນທີ່ດໍາລົງຊີວິດຢູ່ເຂດດັ່ງກ່າວທັງໝົດ 15 ບ້ານ ໃນນີ້: ມີຈໍານວນ 6 ບ້ານແມ່ນຂຶ້ນກັບ ແຂວງໄຊຍະບູລີ ແລະ ອີກ 9 ບ້ານແມ່ນຂຶ້ນກັບແຂວງຫຼວງພະບາງ. ບ້ານຫ້ວຍຊຸຍ ແມ່ນບ້ານໜຶ່ງທີ່ຕັ້ງຢູ່ແຄມນໍ້າຂອງ ແລະ ນອນຢູ່ໃນເຂດກໍ່ສ້າງໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ ທີ່ຕ້ອງໄດ້ຈັດສັນຍົກຍ້າຍອອກໄປຕັ້ງໂຮມກັນກັບບ້ານນາຕໍໃຫຍ່ ເມືອງໄຊຍະບູລີ ແຂວງໄຊຍະບູລີ. ການຈັດສັນຍົກຍ້າຍປະຊາຊົນແມ່ນການຍົກຍ້າຍ ແລະ ຫຍັບຍ້າຍລວມທັງການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການພັດທະນາ (ລັດຖະບານແຫ່ງ ສປປ ລາວ, 2016).

ການຍົກຍ້າຍຖິ່ນຖານ, ເປັນອຸປະສັກອັນໃຫຍ່ຫຼວງບໍ່ສະເພາະແຕ່ຜູ້ຖືກຍົກຍ້າຍເທົ່ານັ້ນ, ຍັງເປັນອຸປະສັກຕໍ່ອໍານາດການຈັດຕັ້ງ ແລະຄະນະຮັບຜິດຊອບແຕ່ລະຂັ້ນ. ເພາະຜູ້ຖືກຍົກຍ້າຍຕ້ອງໄດ້ປ່ຽນຊີວິດການເປັນຢູ່ຢ່າງສິ້ນເຊີງ ເຊັ່ນ: ວິຖີຊີວິດ, ບ່ອນທໍາມາຫາກິນ, ຊຸມຊົນ, ໝູ່ບ້ານ, ການປູກຝັງລ້ຽງສັດ ແລະອື່ນໆ (Yuko Fukuda and Eiji Yamaji, 2018) ດັ່ງນັ້ນ ຜູ້ຖືກຍົກຍ້າຍຈໍາເປັນຕ້ອງມີການປັບຕົວ ເຂົ້າກັບສະພາບແວດລ້ອມອັນໃໝ່ ຊຶ່ງຕ້ອງໃຊ້ເວລາ ແລະ ຄວາມລະອຽດອ່ອນເພື່ອລຶກລ້ຽງແນວຄິດປໍລະປັກ ແລະ ກຽດຊັງຕໍ່ແນວທາງຂອງພັກ-ລັດ. ສະນັ້ນ, ເພື່ອຮັບຮູ້ ແລະເຂົ້າໃຈສະພາບການດໍາລົງຊີວິດ ຂອງພໍ່ແມ່ ປະຊາຊົນຜູ້ຖືກຍົກຍ້າຍອອກຈາກເຂດກໍ່ສ້າງໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ, ຜູ້ທໍາການສຶກສາຈຶ່ງຢາກເຮັດການວິໄຈນີ້ຂຶ້ນ ໂດຍມີຈຸດປະສົງເພື່ອ ສຶກສາຄວາມເພິ່ງພໍໃຈຕໍ່ການຟື້ນຟູຊີວິດການເປັນຢູ່ຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຈາກໂຄງ ການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ.

## 2. ອຸປະກອນ ແລະ ວິທີການສຶກສາ

### 2.1 ການຄັດເລືອກສະຖານທີ່ສຶກສາ ແລະກຸ່ມເປົ້າໝາຍ

ການສຶກສາຄັ້ງນີ້ໄດ້ເລືອກເອົາບ້ານທີ່ຕັ້ງຢູ່ເມືອງໄຊຍະບູລີ, ແຂວງໄຊຍະບູລີ ທີ່ຖືກຈັດສັນຍົກຍ້າຍຈາກໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ. ໂຄງການເຂື່ອນໄຟຟ້ານໍ້າຂອງຈຸດໄຊຍະບູລີ ມີບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການທັງໝົດ 6 ບ້ານສໍາລັບແຂວງໄຊຍະບູລີ, ມີຄອບຄົວທີ່ໄດ້ຮັບຜົນກະທົບທັງໝົດ 236 ຄອບຄົວ, ໃນນີ້ບ້ານທີ່ຖືກຈັດສັນຍົກຍ້າຍຈາກໂຄງການມີ 1 ບ້ານຄື: ບ້ານຫ້ວຍຊຸຍ ຊຶ່ງໄດ້ຈັດສັນຍົກຍ້າຍມາຢູ່ຈຸດບ້ານນາຕໍໃຫຍ່, ເມືອງໄຊຍະບູລີ ແຂວງໄຊຍະບູລີ. ຄົວເຮືອນທັງໝົດໃນບ້ານຫ້ວຍຊຸຍທີ່ຖືກຈັດສັນຍົກຍ້າຍມີ 65 ຄົວເຮືອນ, ມີ 76 ຄອບຄົວ, ພົນລະເມືອງ 333 ຄົນ, ຍິງ 156 ຄົນ. ຢູ່ໃນນີ້ມີ 1 ຄອບຄົວ ອາສາສະໝັກຍົກຍ້າຍດ້ວຍຕົນເອງ. ບ້ານຫ້ວຍຊຸຍ ປະກອບມີ 2 ຊົນເຜົ່າ ຄື: ເຜົ່າລາວ ແລະ ກຶມມຸ. ໃນການຍົກຍ້າຍຈາກບ້ານເກົ່າມາຢູ່ບ້ານໃໝ່ແມ່ນຍົກຍ້າຍມາໂດຍໂຄງການ; ຊຶ່ງການຈັດສັນຍົກຍ້າຍນັ້ນໂຄງການມີແຜນຟື້ນຟູຊີວິດການເປັນຢູ່ສໍາລັບບ້ານຫ້ວຍຊຸຍ ໂດຍເນັ້ນໃສ່ການສົ່ງເສີມກິດຈະກໍາທາງດ້ານກະສິກໍາ ແລະ ກິດຈະກໍານອກກະສິກໍາ. ການສຶກສາຄັ້ງນີ້ໄດ້ສຸມໃສ່ທຸກຄົວ

ເຮືອນທີ່ຖືກຈັດສັນຍົກຍ້າຍຈາກໂຄງການ. ຮູບສະແດງທີ 1 ຂ້າງລຸ່ມນີ້ສະແດງພື້ນທີ່ໂຄງການ ແລະ ບ້ານທີ່ດຳເນີນການສຶກສາ.




ຮູບສະແດງທີ 1: ສະຖານທີ່ບ້ານຈັດສັນຍົກຍ້າຍຈາກໂຄງການເຂື່ອນໄຟຟ້ານ້ຳຂອງຈຸດໄຊຍະບູລີ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ.

## 2.2 ການເກັບຂໍ້ມູນ ແລະ ການວິເຄາະຂໍ້ມູນ

ພາຍຫລັງທີ່ມີການຄັດເລືອກພື້ນທີ່ການສຶກສາແລ້ວ ໄດ້ດຳເນີນການສຳພາດໂດຍໃຊ້ແບບສຳພາດເພື່ອເກັບຂໍ້ມູນເສດຖະກິດ-ສັງຄົມ ກັບຕາງໜ້າຄອບຄົວທີ່ຖືກຈັດສັນຍົກຍ້າຍທຸກຄອບຄົວຊຶ່ງມີຈຳນວນທັງໝົດ 76 ຄອບຄົວ. ການສຶກສາຍັງໄດ້ມີການເກັບຂໍ້ມູນຄຸນນະພາບໂດຍຜ່ານການສັງເກດກິດຈະກຳຕ່າງໆຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍພາຍໃນບ້ານ. ການເກັບຂໍ້ມູນແມ່ນໄດ້ເລີ່ມແຕ່ວັນທີ 4 ເຖິງວັນທີ 11 ຕຸລາ 2024. ໃນການວິເຄາະຂໍ້ມູນແມ່ນໄດ້ໃຊ້ສະຖິຕິພັນລະນາເພື່ອວິເຄາະລັກສະນະທົ່ວໄປຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍ. ສຳລັບຄວາມເພິ່ງພໍໃຈໃນການຟື້ນຟູຊີວິດການເປັນຢູ່ຂອງຄົວເຮືອນໄດ້ມີການທົດສອບທາງສະຖິຕິແບບກຸ່ມດຽວໂດຍໃຊ້ t-test ໃນການທົດສອບຕາມແບບຕັ້ງລຸ່ມນີ້:

$$t = \frac{\bar{X}-a}{S/\sqrt{n}}$$

ໃນນີ້ $a$ = ຄ່າເກນທີ່ກຳນົດ

$\bar{X}$ = ຄ່າສະເລ່ຍທີ່ຄຳນວນໄດ້ຈາກຕົວຢ່າງ

$S$ = ຄ່າຜິດດ່ຽງມາດຕະຖານຂອງຕົວຢ່າງ

$n$ = ຂະໜາດຕົວຢ່າງ

ການທົດສອບແມ່ນໄດ້ທົດສອບຄວາມເພິ່ງພໍໃຈຂອງຄອບຄົວສົມທຽບກັບເກນ ຄື: ຄວາມເພິ່ງພໍໃຈທີ່ເປັນກາງແມ່ນ 3 ຊຶ່ງຈະໃຊ້ 3 ເປັນເກນໃນການປຽບທຽບຄວາມເພິ່ງພໍໃຈໄປໃນທາງບວກ ຫລື ທາງລົບ, ຖ້າຫລາຍກວ່າ 3 ຖືວ່າເປັນບວກ ແລະ ໜ້ອຍກວ່າ 3 ຖືວ່າເປັນລົບ. ການທົດສອບລວມມີຄວາມເພິ່ງພໍໃຈຂອງຄອບຄົວຕໍ່ກັບກິດຈະກຳການສ້າງລາຍຮັບທີ່ໂຄງການສະໜັບສະໜູນ, ຄວາມເພິ່ງພໍໃຈຕໍ່ກັບລາຍຮັບຂອງຄົວເຮືອນ ແລະ ຄວາມເພິ່ງພໍໃຈຕໍ່ການດຳລົງຊີວິດຢູ່ໃນບ້ານໃໝ່.

## 3. ຜົນໄດ້ຮັບ ແລະ ການວິເຄາະຜົນ

ຈາກຕາຕະລາງທີ 1 (ໜ້າທີ11) ສະແດງໃຫ້ເຫັນລັກສະນະທົ່ວໄປຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຈາກໂຄງການເຂື່ອນໄຟຟ້ານ້ຳຂອງຈຸດໄຊຍະບູລີ ຂອງແຂວງໄຊຍະບູລີ. ໃນຈຳນວນຄອບຄົວທີ່ຖືກຍົກຍ້າຍມີ 68 ຄອບຄົວທີ່ຜູ້ຊາຍເປັນຫົວໜ້າຄອບຄົວ ແລະ 8 ຄອບຄົວທີ່ແມ່ຍິງເປັນຫົວໜ້າຄອບຄົວ. ອາຍຸສະເລ່ຍຂອງຫົວໜ້າຄອບຄົວແມ່ນ 52.3 ປີ ຊຶ່ງມີຄ່າຜັນປ່ຽນມາດຕະຖານຢູ່ທີ່ 9.9 ປີ, ຊຶ່ງເຫັນວ່າຫົວໜ້າຄອບຄົວມີອາຍຸແຕກຕ່າງກັນຫລາຍພໍສົມຄວນ. ຫົວໜ້າຄອບຄົວຈຳນວນ 30 ທ່ານ (ກວມເອົາປະມານ 39.5%) ບໍ່ເຄີຍໄດ້ຮຽນໜັງສື, ໃນຂະນະທີ່ຫົວໜ້າຄອບຄົວຈຳນວນ 43 ທ່ານ (ກວມ

ເອົາ 56.6%) ຮຽນຈົບການສຶກສາລະດັບປະຖົມສຶກສາ ແລະ ມີຫົວໜ້າຄອບຄົວພຽງ 3 ທ່ານ (ກວມເອົາ 3.9%) ຮຽນຈົບການສຶກສາລະດັບມັດທະຍົມຕອນຕົ້ນ. ສໍາລັບລະດັບວິຊາຊີບແລ້ວ, ຫົວໜ້າຄອບຄົວຈໍານວນ 72 ທ່ານ ( ກວມເອົາ 94.7%) ແມ່ນບໍ່ໄດ້ຮຽນວິຊາຊີບ ຫລື ບໍ່ມີວິຊາສະເພາະ, ໃນຂະນະທີ່ ຫົວໜ້າຄອບຄົວ 2 ທ່ານ ( ກວມເອົາ 2.6%) ຮຽນຈົບວິຊາຊີບຊັ້ນຕົ້ນ, ອີກ 1 ທ່ານ ( ພຽງແຕ່ 1.3%) ຮຽນຈົບວິຊາຊີບຊັ້ນກາງ ແລະ ອີກ 1 ທ່ານ (ພຽງແຕ່ 1.3%) ຮຽນຈົບວິຊາຊີບຊັ້ນສູງ. ເບິ່ງລວມແລ້ວຫົວໜ້າຄອບຄົວທີ່ຖືກຈັດສັນຍົກຍ້າຍຈາກໂຄງການນີ້ແມ່ນມີລະດັບການສຶກສາຂ້ອນຂ້າງຕໍ່າ ແລະ ເກືອບທັງໝົດ ແມ່ນບໍ່ໄດ້ຮຽນວິຊາຊີບ.

ການຈັດສັນທີ່ດິນເພື່ອເປັນທີ່ຢູ່ອາໄສ ແລະ ເພື່ອທໍາການຜະລິດໃນການຟື້ນຟູອາຊີບໃຫ້ແກ່ຄົວເຮືອນ ແລະ ປະຊາ ຊົນທີ່ຖືກຈັດສັນຍົກຍ້າຍຈາກໂຄງການພັດທະນາ, ໂດຍສະເພາະແມ່ນຄົວເຮືອນທີ່ຍົກຍ້າຍຈາກໂຄງການເຂື່ອນໄຟ ຟ້ານໍ້າຂອງຈຸດໄຊຍະບູລີ ຂອງປະຊາຊົນທີ່ຢູ່ແຂວງໄຊຍະບູລີ ແມ່ນມີຄວາມສໍາຄັນທີ່ສຸດ. ຜູ້ທີ່ຍົກຍ້າຍຈາກບ້ານຫ້ວຍຊຸຍ (ບ້ານເກົ່າ) ມາຢູ່ບ້ານນາຕໍໃຫຍ່ (ບ້ານໃໝ່) ເມືອງໄຊຍະບູລີ, ແຂວງໄຊຍະບູລີ ແຕ່ລະຄອບຄົວແມ່ນໄດ້ຮັບທີ່ດິນເພື່ອປຸກສ້າງທີ່ຢູ່ອາໄສຈໍານວນ 600 ຕາແມັດ ແລະ ທີ່ດິນເພື່ອທໍາການຜະລິດ ຈໍານວນ 7,500 ຕາແມັດ. ນອກຈາກນັ້ນໂຄງການໄດ້ພັດທະນາພື້ນຖານໂຄງລ່າງຕ່າງໆເປັນຕົ້ນເສັ້ນທາງ, ລະບົບຕາໜ່າງໄຟຟ້າ, ລະບົບນໍ້າປະປາ ແລະ ພື້ນຖານໂຄງລ່າງບໍລິການທີ່ຈໍາເປັນອື່ນໆ ເພື່ອອໍານວຍຄວາມສະດວກໃນການດໍາລົງຊີວິດຂອງຜູ້ທີ່ຖືກຈັດສັນຍົກຍ້າຍ.

ຄອບຄົວທີ່ໄດ້ຮັບການຈັດສັນທີ່ດິນໃຫ້ໄດ້ນໍາໃຊ້ດິນຂອງເຂົາເຈົ້າເພື່ອຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າຕາມການຊີ້ນໍາຂອງໜ່ວຍງານຈັດຕັ້ງປະຕິບັດໂຄງການ ແລະ ການຊຸກຍູ້ສົ່ງເສີມຂອງວິຊາການຂອງໂຄງການ. ໃນນັ້ນໂຄງ ການໄດ້ຕັ້ງເຮືອນໃຫ້ທຸກຄອບຄົວໃນທີ່ດິນ 600 ຕາແມັດ ທີ່ໂຄງການໄດ້ຈັດສັນໃຫ້ ພ້ອມທັງຊຸກຍູ້ສົ່ງເສີມໃຫ້ມີການປູກພືດສວນຄົວ, ປູກຕົ້ນໄມ້ກິນໝາກ, ລ້ຽງສັດປີກ, ລ້ຽງປາດຸກ, ລ້ຽງກົບ, ຕົ້ມເຫລົ້າ ແລະ ກິດຈະກໍາອື່ນໆໃນເນື້ອທີ່ດິນທີ່ເຫລືອປຸກເຮືອນຂອງເຂົາເຈົ້າ ເພື່ອນໍາຜົນຜະລິດມາຮັບໃຊ້ບໍລິໂພກໃນຄອບຄົວ ແລະ ສ່ວນທີ່ເຫລືອເພື່ອຂາຍເປັນລາຍຮັບໃຫ້ແກ່ຄອບຄົວ. ສ່ວນຕອນດິນເພື່ອທໍາການຜະລິດທີ່ໂຄງການຈັດສັນໃຫ້ຈໍານວນ 7,500 ຕາແມັດ ໂຄງການໄດ້ຊຸກຍູ້ສົ່ງເສີມໃຫ້ປູກຢາງພາລາເພື່ອສ້າງລາຍຮັບໃນໄລຍະຍາວ, ຊຶ່ງມາຮອດປັດຈຸບັນມີ 52 ຄອບຄົວໄດ້ປູກຢາງພາລາ ແລະ ຂາຍຜົນຜະລິດນໍ້າຢາງເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວແລ້ວ. ຄອບຄົວ ທີ່ໄດ້ນໍາໃຊ້ດິນເພື່ອທໍາການຜະລິດນີ້ ຈໍານວນ 12 ຄອບຄົວ ໄດ້ໃຊ້ດິນຂອງເຂົາເຈົ້າເພື່ອປູກສາລີ, ມັນຕົ້ນ ແລະ ປູກພືດ ອື່ນໆ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ອີກ 12 ຄອບຄົວໄດ້ນໍາໃຊ້ດິນຕອນດັ່ງກ່າວຂອງເຂົາເຈົ້າເພື່ອປູກເຂົ້າໄຮ່ເນີນສູງ ເພື່ອບໍລິໂພກໃນຄອບຄົວ (ຕາຕະລາງທີ 2). ນອກຈາກນີ້ແລ້ວ ບາງຄອບຄົວທີ່ມີປະສົບການໃນການຄ້າຂາຍຍ່ອຍ ກໍ່ໄດ້ມີການຕັ້ງຮ້ານຂາຍເຄື່ອງຍ່ອຍຢູ່ກັບເຮືອນຂອງເຂົາເຈົ້າເພື່ອຂາຍເຄື່ອງຍ່ອຍ, ລວມມີເຂົ້າໜົມ, ອາຫານແຫ້ງ, ເຄື່ອງແຕ່ງກິນ, ເຫລົ້າ-ເບຍ, ນໍ້າອັດລົມ ແລະ ນໍ້າດື່ມຊູກໍາລັງຕ່າງໆ. ບາງຄອບຄົວທີ່ສົນໃຈໃນວຽກງານບໍລິການເສີມສວຍ, ຫັດຖະກໍາຕໍ່າຫູກ ແລະ ຈັກສານກໍໄດ້ມີການດໍາເນີນກິດຈະການຂອງເຂົາເຈົ້າຢູ່ກັບເຮືອນ.

ການຝຶກອົບຮົມວິຊາຊີບ ແລະ ການສ້າງທັກສະຄວາມຮູ້ເປັນສິ່ງທີ່ຈໍາເປັນໃນການຟື້ນຟູຊີວິດການເປັນຢູ່ຂອງປະຊາ ຊົນທີ່ຍົກຍ້າຍຈາກບ້ານເກົ່າເພື່ອດໍາລົງຊີວິດຢູ່ໃນບ້ານທີ່ຈັດສັນໃຫ້ຢູ່ໃໝ່. ໃນນີ້ມີຈໍານວນ 73 ທ່ານ (ກວມເອົາ 96.0%) ແມ່ນໄດ້ຮັບການຝຶກອົບຮົມ ແລະ ໄປທັດສະນະສຶກສາວຽກງານລ້ຽງສັດ ແລະ ການປະມົງ, 26 ທ່ານ (ກວມເອົາ 34.2%) ໄດ້ຮັບການຝຶກອົບຮົມ ແລະ ໄປທັດສະນະສຶກສາກ່ຽວກັບວຽກການປູກຢາງພາລາ, ຈໍານວນ 18 ທ່ານ (23.9%) ໄດ້ຮັບການຝຶກອົບຮົມ ແລະ ໄປທັດສະນະສຶກສາ ກ່ຽວກັບການປູກຝັງ. ນອກນັ້ນຍັງມີ 17 ທ່ານ (ກວມເອົາ 22.4%) ໄດ້ຮັບການຝຶກອົບຮົມ ແລະ ໄປທັດສະນະສຶກສາກ່ຽວກັບການບໍລິການຕ່າງໆ, ການຄ້າຂາຍເຄື່ອງຍ່ອຍ, ການຕົ້ມເຫລົ້າ, ການຕໍ່າຫູກ, ການຈັກສານ, ແລະ ວຽກງານອື່ນໆ (ຕາຕະລາງທີ 3).

ພາຍຫລັງໂຄງການໄດ້ສົ່ງເສີມການຟື້ນຟູຊີວິດການເປັນຢູ່ ແລະ ກິດຈະກໍາການສ້າງລາຍຮັບໃຫ້ຄອບຄົວທີ່ຖືກຈັດສັນຍົກຍ້າຍມາແຕ່ປີ 2013 ຈົນເຖິງປັດຈຸບັນເຫັນວ່າປະສົບຄວາມສໍາເລັດຫລາຍພໍສົມຄວນ. ຈາກການສໍາພາດຄອບຄົວທີ່ຖືກຈັດສັນຍົກຍ້າຍທັງໝົດ 76 ຄອບຄົວເຫັນວ່າເຂົາເຈົ້າມີລາຍຮັບຕໍ່ປີສະເລ່ຍແມ່ນ 60,688,800 ກີບ, ໂດຍຄອບຄົວທີ່ມີລາຍຮັບສູງສຸດຕໍ່ປີມີເຖິງ 266,400,000 ກີບ, ແລະ ຄອບຄົວທີ່ມີລາຍຮັບຕໍ່າສຸດແມ່ນ 600,000 ກີບຕໍ່ປີ. ຄ່າຜັນປ່ຽນມາດຕະຖານຂອງລາຍຮັບຂອງຄອບຄົວແມ່ນ 38,302,800 ກີບ. ເບິ່ງລວມແລ້ວ ກິດຈະກໍາທີ່ໂຄງການສະໜັບສະໜູນເພື່ອຟື້ນຟູຊີວິດການເປັນຢູ່ທີ່ສ້າງລາຍຮັບໄດ້ຫລາຍແມ່ນການປູກຢາງພາລາ. ຢ່າງໃດກໍຕາມມີຫລາຍຄອບຄົວກໍໄດ້ນໍາໃຊ້ຄວາມຮູ້ ແລະ ທັກສະທີ່ໄດ້ຮັບການຝຶກອົບຮົມຈາກໂຄງການເພື່ອໄປປະກອບອາຊີບຢູ່ບ່ອນອື່ນ ເປັນຕົ້ນ ການເສີມສວຍ,

**ຄວາມພໍໃຈຂອງຜູ້ທີ່ຖືກຈັດສັນຍົກຍ້າຍໃນການຟື້ນຟູຊີວິດການເປັນຢູ່**

- **ຄວາມພໍໃຈຕໍ່ກິດຈະກໍາການສ້າງລາຍຮັບ**

ຄະແນນສະເລ່ຍຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ກັບກິດຈະກໍາການສ້າງລາຍຮັບທີ່ໂຄງການສະໜັບສະໜູນທີ່ຄິດໄລ່ໄດ້ແມ່ນ 4.17 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.575 ຜົນ

ຂອງການທົດສອບທາງສະຖິຕິແບບ t-test ພົບວ່າ ຄ່າ t ທີ່ຄໍານວນໄດ້ (ຄ່າສົມບູນ) ແມ່ນ 17.72 ເມື່ອໄປສົມທຽບກັບຄ່າ t ໃນຕາຕະລາງໃນຊັ້ນຂອງຄວາມເປັນອິດສະລະ 75 ໃນລະດັບຄວາມເຊື່ອໝັ້ນ 95% ແມ່ນ 1.994 ເຫັນວ່າຄ່າສົມບູນ t ທີ່ຄໍານວນໄດ້ໃຫຍ່ກວ່າ ຄ່າ t ໃນຕາຕະລາງ ສະແດງວ່າຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ກິດຈະກໍາການສ້າງລາຍຮັບທີ່ໂຄງການສະໜັບສະໜູນແມ່ນມີຄວາມເພິ່ງພໍໃຈໃນທາງບວກ.

- **ຄວາມພໍໃຈຕໍ່ລາຍຮັບຂອງຄອບຄົວຈາກກິດຈະກໍາສະໜັບສະໜູນຈາກໂຄງການ**

ຄະແນນສະເລ່ຍຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ກັບລາຍຮັບຂອງຄົວເຮືອນທີ່ຄິດໄລ່ໄດ້ແມ່ນ 4.15 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.655 ຜົນຂອງການທົດສອບທາງສະຖິຕິແບບ t-test ພົບວ່າ ຄ່າ t ທີ່ຄໍານວນໄດ້ (ຄ່າສົມບູນ) ແມ່ນ 15.29 ເມື່ອໄປສົມທຽບກັບຄ່າ t ໃນຕາຕະລາງໃນຊັ້ນຂອງຄວາມເປັນອິສະລະ 75 ໃນລະດັບຄວາມເຊື່ອໝັ້ນ 95% ແມ່ນ 1.994 ເຫັນວ່າຄ່າສົມບູນ t ທີ່ຄໍານວນໄດ້ໃຫຍ່ກວ່າ ຄ່າ t ໃນຕາຕະລາງ ສະແດງວ່າຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ລາຍຮັບຂອງຄອບຄົວແມ່ນມີຄວາມເພິ່ງພໍໃຈໃນທາງບວກ.

- **ຄວາມພໍໃຈຕໍ່ການດໍາລົງຊີວິດຢູ່ບ້ານຈັດສັນ**

ຄະແນນສະເລ່ຍຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ກັບການດໍາລົງຊີວິດຢູ່ບ້ານຈັດສັນ ທີ່ຄິດໄລ່ໄດ້ແມ່ນ 4.26 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.655 ຜົນຂອງການທົດສອບທາງສະຖິຕິແບບ t-test ພົບວ່າ ຄ່າ t ທີ່ຄໍານວນໄດ້ (ຄ່າສົມບູນ) ແມ່ນ 19.11 ເມື່ອໄປສົມທຽບກັບຄ່າ t ໃນຕາຕະລາງໃນຊັ້ນຂອງຄວາມເປັນອິສະລະ 75 ໃນລະດັບຄວາມເຊື່ອໝັ້ນ 95% ແມ່ນ 1.994 ເຫັນວ່າຄ່າສົມບູນ t ທີ່ຄໍານວນໄດ້ໃຫຍ່ກວ່າ ຄ່າ t ໃນຕາຕະລາງ ສະແດງວ່າຄວາມເພິ່ງພໍໃຈຂອງຄອບຄົວທີ່ຖືກຈັດສັນຍົກຍ້າຍຕໍ່ການດໍາລົງຊີວິດຢູ່ໃນບ້ານຈັດສັນແມ່ນມີຄວາມເພິ່ງພໍໃຈໃນທາງບວກ.

## 4. ວິພາກຜົນ

ອີງໃສ່ແນວຄວາມຄິດກ່ຽວກັບ "ການຟື້ນຟູຊີວິດການເປັນຢູ່ຂອງຜູ້ທີ່ຖືກຈັດສັນຍົກຍ້າຍຕ້ອງມີກິດຈະກໍາການດໍາລົງຊີວິດທີ່ຍືນຍົງ ແລະ ມີລາຍຮັບທີ່ແນ່ນອນ", ການສຶກສາຄັ້ງນີ້ເປັນການສຶກສາແບບບັນລະຍາຍເພື່ອສ້າງຄວາມເຂົ້າໃຈກ່ຽວກັບແນວຄວາມຄິດຂອງຜູ້ຖືກຈັດສັນຍົກຍ້າຍຕໍ່ກັບການດໍາລົງຊີວິດຂອງເຂົາເຈົ້າ. ການສຶກສາຄັ້ງນີ້ໄດ້ມີການທົບທວນເອກະສານທີ່ກ່ຽວຂ້ອງ ແລະ ເກັບຂໍ້ມູນຢູ່ພາກສະໜາມໂດຍການສໍາພາດຄອບຄົວທີ່ຖືກຈັດສັນຍົກຍ້າຍຈາກໂຄງການ. ການຟື້ນຟູຊີວິດການເປັນຢູ່ລວມມີການຈັດສັນທີ່ດິນເພື່ອປຸກສ້າງທີ່ຢູ່ອາໄສ ແລະ ເພື່ອການຜະລິດແບບຖາວອນ ຊຶ່ງເຮັດໃຫ້ມີຄວາມໝັ້ນຄົງທາງດ້ານກໍາມະສິດທີ່ດິນ. ການຝຶກອົບຮົມເພື່ອຍົກສູງຄວາມຮູ້ ແລະ ທັກສະໃນການປະກອບອາຊີບເພື່ອດໍາລົງຊີວິດຢູ່ໃນບ້ານໃໝ່ຊຶ່ງສອດຄ່ອງກັບການພັດທະນາທຶນທາງດ້ານຊັບພະຍາກອນມະນຸດ. ຜົນຂອງການສຶກສາຄັ້ງນີ້ພົບວ່າ ປະຊາຊົນທີ່ຖືກຍົກຍ້າຍຈາກໂຄງການກໍ່ສ້າງເຂື່ອນໄຟຟ້າແມ່ນໍ້າຂອງ ໄຊຍະບູລີ ແມ່ນມີຄວາມເພິ່ງພໍໃຈ ຕໍ່ການສ້າງລາຍຮັບຂອງຄົວເຮືອນເຂົາເຈົ້າໄດ້ຮັບ, ມີຄວາມເພິ່ງພໍໃຈໃນທາງບວກຕໍ່ການດໍາລົງຊີວິດຢູ່ບ້ານຈັດສັນ ຊຶ່ງສອດຄ່ອງກັບ (Asmita Kabra 2018). ນອກຈາກນັ້ນ ບັນດາຄອບຄົວທີ່ຖືກຍົກຍ້າຍ ຍັງໄດ້ຮັບການສົ່ງເສີມການປູກຝັງ, ລ້ຽງສັດ, ການຄ້າຂາຍຍ່ອຍ, ການບໍລິການ, ການເຮັດໄຮ່, ແລະ ການປູກຢາງພາລາ ຈາກໂຄງການເຂື່ອນໄຟຟ້ານໍາ້ຂອງໄຊຍະບູລີ ເຮັດໃຫ້ເຂົາເຈົ້າມີຄວາມເພິ່ງພໍໃຈ ຊຶ່ງສອດຄ່ອງກັບ (Babar Shahbaz, Qasim Ali Shah, Abid Qaiyum Suleri, Mohsin Ali Kazmi, Steve Commins (2014). ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນບ້ານຈັດສັນສຸມໃສ່ການສ້າງລາຍຮັບທີ່ມີຄວາມຫລາກຫລາຍທີ່ບໍ່ເນັ້ນໃສ່ການສ້າງລາຍຮັບຈາກທາງດຽວ. ການປູກຢາງພາລາເປັນການຫັນປ່ຽນອາຊີບທີ່ໝັ້ນຄົງ ແລະ ມີລາຍຮັບທີ່ດີຂອງຄອບຄົວຜູ້ຖືກຈັດສັນຍົກຍ້າຍ ຊຶ່ງມີລາຍຮັບຫລາຍກວ່າ 100 ລ້ານກີບຕໍ່ປີ ຊຶ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ຈັນສຸກ ຫວານແພງພັນ (2015) ແລະ **(**WWF Nepal 2008**).**

ຄອບຄົວທີ່ຖືກຈັດສັນຍົກຍ້າຍມີຄວາມພໍໃຈຫລາຍຕໍ່ກິດຈະກໍາທີ່ທາງໂຄງການສະໜັບສະໜູນ, ພໍໃຈຫລາຍຕໍ່ກັບລາຍຮັບຂອງຄົວເຮືອນ ແລະ ເພິ່ງພໍໃຈຫລາຍຕໍ່ການດໍາລົງຊີວິດຢູ່ໃນບ້ານໃໝ່ ຍ້ອນເຂົາເຈົ້າມີລາຍຮັບດີກວ່າຢູ່ບ້ານເກົ່າ, ມີກິດຈະກໍາການສ້າງລາຍຮັບທີ່ຫລາກຫລາຍ ຫລື ມີຫລາຍທາງເລືອກໃນການດໍາລົງຊີວິດ, ມີຄວາມສະດວກໃນການຄົມມະນາຄົມ, ການສື່ສານ, ມີໄຟຟ້າ, ນໍ້າປະປາ ແລະ ຢູ່ໃກ້ກັບຕະຫລາດ ຊຶ່ງສອດຄ່ອງກັບ Narmadha Velu and Alison Anuradha (2024).

## 5. ສະຫລຸບຜົນ

ການສຶກສາຄັ້ງນີ້ສາມາດສະຫລຸບວ່າການປູກຢາງພາລາເປັນກິດຈະກໍາທີ່ຊ່ວຍໃຫ້ຄອບຄົວທີ່ຖືກຈັດສັນຍົກຍ້າຍສ່ວນຫລາຍມີອາຊີບ ແລະ ມີລາຍຮັບທີ່ໝັ້ນຄົງ, ແຕ່ບໍ່ເໝາະສົມກັບຄົວເຮືອນທີ່ຂາດແຮງງານ. ສ່ວນອາຊີບອື່ນເປັນຕົ້ນແມ່ນ ການລ້ຽງໝູ ແລະ ການຄ້າຂາຍຍ່ອຍ ກໍເປັນກິດຈະກໍາທີ່ສ້າງລາຍຮັບໃຫ້ແກ່ຄອບຄົວເປັນຢ່າງດີພໍສົມຄວນ. ກິດຈະກໍາສວນຄົວເປັນກິດຈະກໍາທີ່ຊ່ວຍໃຫ້ຜູ້ຈັດສັນຍົກຍ້າຍເຂົ້າເຖິງອາຫານປະຈໍາວັນ. ການໃຫ້ຄວາມຮູ້ ແລະ ການສົ່ງເສີມອາຊີບທີ່ຫລາກຫລາຍເປັນການຟື້ນຟູຊີວິດການເປັນຢູ່ທີ່ດີສໍາລັບຜູ້ຈັດສັນຍົກຍ້ານ. ສະຫລຸບແລ້ວຄອບ ຄົວທີ່ຍົກຍ້າຍມາຢູ່ບ້ານຈັດສັນທີ່ຈຸດບ້ານນາຕໍໃຫຍ່ແມ່ນມີຄວາມເພິ່ງພໍໃຈຕໍ່ການປະກອບອາຊີບ, ລາຍຮັບ ແລະ ການດໍາລົງຊີວິດຂອງເຂົາເຈົ້າ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**


ກະຊວງແຜນການ ແລະ ການລົງທຶນ. (2016). *ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ VIII (2016-2020).*

ກະຊວງແຜນການ ແລະ ການລົງທຶນ. (2011). *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII (2011-2015).*

ກະຊວງພະລັງງານ ແລະ ບໍ່ແຮ່. (2016). *ວິໄສທັດຮອດປີ 2030, ຍຸດທະສາດການພັດທະນາ 2025 ແລະ ແຜນພັດທະນາຂະແໜງພະລັງງານ ແລະ ບໍ່ແຮ່ 5 ປີຄັ້ງທີ VIII (2016-2020).*

ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່. (2018). *ບົດລາຍງານການຈັດຕັ້ງປະຕິບັດໂຄງການເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ.*

ທວານແພງພັນ, ຈ.(2015). *ການປັບຕົວດ້ານຊີວິດການເປັນຢູ່ຂອງປະຊາຊົນຈາກຜົນກະທົບຂອງການນໍາໃຊ້ທີ່ດິນເພື່ອການປູກພືດເປັນສິນຄ້າ, ກໍລະນີສຶກສາບ້ານກ້ວຍ ເມືອງສິງ ແຂວງຫຼວງນໍ້າທາ.* ນະຄອນຫຼວງວຽງຈັນ ສາຂາ ການຈັດການພື້ນທີ່ເພື່ອການພັດທະນາ, ຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດ.

ສຸວັນນາທອງ, ບ.(2020). *ຜົນຂອງການຍົກຍ້າຍບ້ານຂອງປະຊາຊົນເມືອງນາແລ ແຂວງຫຼວງນໍ້າທາ*, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້, ມະຫາວິທະຍາໄລສຸພານຸວົງ.

ລັດຖະບານ. (2016). *ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ* ເລກທີ 84/ລບ, ລົງວັນທີ 5 ເມສາ 2016.

ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ (RMU). (2013). *ແຜນງານຟື້ນຟູຊີວິດການເປັນຢູ່ຜູ້ຖືກຍົກຍ້າຍຈັດສັນຈາກບ້ານຫ້ວຍຊຸຍ ມາຢູ່ບ້ານຈັດສັນນາຕໍໃຫຍ່ ເມືອງໄຊຍະບູລີ, ແຂວງໄຊຍະບູລີ.*

Kabra, A. (2018). Displacement, resettlement, and livelihood restoration: Safeguard standards in practice. *Development in Practice, 28*(2), 269-279. https://doi.org/10.1080/09614524.2018.1420135

Shahbaz, B., et al. (2014). *Surveying livelihoods, service delivery and government: Baseline evidence from Pakistan*.

Lax, J., & Krug, J. (2013). *Livelihoods assessment: A participatory tool for natural resource dependent communities*.

Velu, N., & Anuradha, A. (2024). *Heritage education and livelihood satisfaction in Indian rural communities: Towards sustainable development..*

Phonevilay, S. (2013). *People's livelihood adaptation in rural resettlement project in Laos*.

Chanthavong, S. (2022). *Mekong River hydropower development, compensation and the resettlement legal framework in Lao PDR: The case of Luang Prabang Dam*.

Tong, W., Zhu, L., & Lo, K. (2019). Livelihood adaptation and life satisfaction among land-lost farmers: Critiquing China's urbanisation-driven land appropriation. *Journal Name*, *Volume*(Issue), pages.

WWF Nepal. (2008). *Livelihoods outcomes: Study and analysis of changes in the livelihoods of bottleneck level community forest users, Tal*.

Fukuda, Y., & Yamaji, E. (2018). Effects of living conditions on livelihood satisfaction in Sri Lanka: Living sectors and tea industry. *Journal Name*, *Volume*(Issue), pages https://www.ifc.org/content/dam/ifc/doc/2023/ifc (Search date: 28 September 2024): Module 5: Livelihood Restoration and Improvement.


**ຕາຕະລາງ ທີ 1 ລັກສະນະຂອງຄົວເຮືອນທີ່ຖືກຈັດສັນຍົກຍ້າຍ**

| **ລັກສະນະຂອງຄົວເຮືອນ** | | |
|---|---|---|
| ເພດຂອງຫົວໜ້າຄົວເຮືອນ | ຍິງ | 8 |
| | ຊາຍ | 68 |
| ອາຍຸຂອງຫົວໜ້າຄົວເຮືອນ | ສະເລ່ຍ | 52.3 |
| | ຄ່າຜັນປ່ຽນມາດຕະຖານ | 9.9 |

| | | |
|---|---|---|
| ລະດັບການສຶກສາຂອງຫົວໜ້າຄົວເຮືອນ | ບໍ່ໄດ້ຮຽນ | 30 |
| | ຈົບຊັ້ນປະຖົມສຶກສາ | 43 |
| | ຈົບຊັ້ນມັດທະຍົມຕອນຕົ້ນ | 3 |
| ລະດັບວິຊາສະເພາະ | ບໍ່ມີວິຊາສະເພາະ | 72 |
| | ຊັ້ນຕົ້ນ | 2 |
| | ຊັ້ນກາງ | 1 |
| | ຊັ້ນສູງ | 1 |
| ສະມາຊິກໃນຄົວເຮືອນ | ສະເລ່ຍ | 5.4 |
| | ຄ່າຜັນປ່ຽນມາດຕະຖານ | 1.5 |

**ຕາຕະລາງທີ 2. ເນື້ອທີ່ດິນທີ່ໂຄງການຈັດສັນໃຫ້ຄອບຄົວທີ່ຖືກຈັດສັນຍົກຍ້າຍຈາກໂຄງການ**

| **ປະເພດທີ່ດິນທີ່ໂຄງການສະໜອງໃຫ້** | **ເນື້ອທີ່ (ຕາແມັດ)** | **ຈຳນວນ** |
|---|---|---|
| ດິນປຸກສ້າງ | 600 | 76 |
| ດິນທຳການຜະລິດ | 7500 | 76 |
| ຜູ້ນຳໃຊ້ດິນທີ່ໂຄງການຈັດສັນໃຫ້ໃນການປູກຢາງພາລາ | 7500 | 52 |
| ຜູ້ນຳໃຊ້ດິນທີ່ໂຄງການຈັດສັນໃຫ້ເພື່ອທຳສວນປູກສາລີ ແລະ ພື້ນອື່ນໆ | 7500 | 12 |
| ຜູ້ນຳໃຊ້ດິນທີ່ໂຄງການຈັດສັນໃຫ້ເພື່ອປູກເຂົ້າເນີນສູງ | 7500 | 12 |

**ຕາຕະລາງທີ 3: ການເຂົ້າຮ່ວມຝຶກອົບຮົມວິຊາຊີບ ແລະ ໄປທັດສະນະສຶກສາ**

| **ສາຂາວິຊາທີ່ໄດ້ຮັບການຝຶກອົບຮົມ** | **ຈຳນວນ** |
|---|---|
| ຝຶກວິຊາການປູກຝັງ ແລະ ໄປທັດສະນະສຶກສາ | 18 |
| ຝຶກວິຊາການລ້ຽງສັດ ແລະ ລ້ຽງປາ ແລະ ໄປທັດສະນະສຶກສາ | 73 |
| ຝຶກວິຊາການປູກຢາງພາລາ ແລະ ໄປທັດສະນະສຶກສາ | 26 |
| ຝຶກວິຊາການບໍລິການ, ຕົ້ມເຫລົ້າ, ຄ້າຂາຍຍ່ອຍ, ຫັດຖະກຳ ແລະ ອື່ນໆ | 17 |

**ຕາຕະລາງທີ 4 ລາຍຮັບຂອງຄອບຄົວຈາກກິດຈະກຳທີ່ໂຄງການສົ່ງເສີມ**

| **ລາຍຮັບຂອງຄອບຄົວ** | **ສະເລ່ຍ** | **ຕ່ຳສຸດ** | **ສູງສຸດ** | **ຄ່າຜັນປ່ຽນມາດຕະຖານ** |
|---|---|---|---|---|
| ລາຍຮັບຂອງຄອບຄົວຕໍ່ປີ | 60,688,800 | 600,000 | 266,400,000 | 38,302,800 |